ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລສຸພານຸວົງ ເລກທີ..268./ມສ

ຫຼວງພະບາງ, ວັນທີ..20..09...22..

## ແຈ້ງການ (ດ່ວນ)

**ເຖິງ:** ທ່ານ ຄະນະບໍດີ 6 ຄະນະວິຊາ ຢູ່ພາຍໃນມະຫາວິທະຍາໄລ ສຸພານຸວົງ

**ເລື່ອງ:** ການຈັດຕັ້ງການຮຽນ-ການສອນຂອງມະຫາວິທະຍາໄລ ສຸພານຸວົງ, ສົກສຶກສາ 2022-2023

- **ອີງຕາມ:** ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງມະຫາວິທະຍາໄລ ສຸພານຸວົງ ສະບັບເລກທີ 099/ນຍ, ລົງວັນທີ 03 ເມສາ 2009.
- **ອີງຕາມ:** ປະຕິທິນການສຶກສາ ມະຫາວິທະຍາໄລສຸພານຸວົງ, ສະບັບເລກທີ 636/ມສ, ລົງວັນທີ 8/09/2022.

ເພື່ອຮັບປະກັນທາງດ້ານການຈັດຕັ້ງການຮຽນ-ການສອນ ປະຈຳສົກສຶກສາ 2022-2023 ຖືກດຳເນີນໄປຢ່າງປົກກະຕິ ນັບແຕ່ວັນທີ 19 ກັນຍາ 2022 ແລະ ໃຫ້ມີຄຸນະພາບດີຂຶ້ນເທື່ອລະກ້າວນັ້ນ. ອະທິການບໍດີ ມະຫາວິທະຍາໄລສຸພານຸວົງ ຈຶ່ງໄດ້ອອກແຈ້ງມາຍັງທ່ານ ຄະນະບໍດີ ແລະ ພາກສ່ວນຮັບຜິດຊອບວຽກງານທີ່ກ່ຽວຂ້ອງ ຢູ່ພາຍໃນຄະນະຂອງຕົນເອງໃຫ້ຮີບຮ້ອນ ແລະ ເລັ່ງດ່ວນໃນການກວດກາວຽກງານຕ່າງໆຄືນຕື່ມ ເຊິ່ງມີລາຍລະອຽດ ດັ່ງນີ້:

1) ແຈ້ງຕາຕະລາງການຮຽນ-ການສອນ ຕໍ່ກັບນັກສຶກສາໃນຊັ້ນຕ່າງໆໃຫ້ຮັບຮູ້ ແລະ ທັນກັບສະພາບການ
2) ແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມການຮຽນ-ການສອນ (ປະຈຳພາກຮຽນ) ໂດຍໄວ ເພື່ອຕິດຕາມ ແລະ ກວດກາ
3) ກວດກາທາງດ້ານຄວາມພ້ອມຂອງອຸປະກອນໃນຫ້ອງຮຽນ ເພື່ອຮັບໃຊ້ການຮຽນ-ການສອນຢ່າງມີປະສິດທິພາບ
4) ອະນາໄມຂອບເຂດບໍລິເວນອາຄານ ແລະ ສະຖານທີ່ການສຶກສາຂອງຕົນໃຫ້ມີຄວາມສະອາດ ແລະ ສວຍງາມ
5) ສົ່ງສະຖິຕິການລົງທະບຽນຂອງປີທີ 2 ຫາປີສຸດທ້າຍໃຫ້ສຳເລັດຕາມແຜນທີ່ວາງໄວ້ ແລ້ວຈັດສົ່ງໃຫ້ຫ້ອງການວິຊາການ ບໍ່ກາຍວັນທີ 23 ກັນຍາ 2022 ເພື່ອສັງລວມຂໍ້ມູນ ແລະ ລາຍງານຕໍ່ຄະນະນຳ ມສ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງເອົາໃຈໃສ່ ແລະ ພ້ອມກັນປະຕິບັດຢ່າງເຂັ້ມງວດ.

ເຊັນແທນ **ອະທິການບໍດີ**

ວິລະ ອາໄນລັກ